**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະສະເພາະກິດ ເພື່ອປ້ອງກັນ,
ຄວບຄຸມ ແລະ ແກ້ໄຂການລະບາດ
ພະຍາດ COVID-19

ເລກທີ 020 /ສກພ
ນະຄອນຫຼວງວຽງຈັນ, ວັນທີ 02 /ເມສາ 2020.

# ບົດແນະນຳ
## ວ່າດ້ວຍ ການຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີວ່າ ດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ-19

ເຖິງ: ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງໃນຂອບເຂດທົ່ວປະເທດ,

- ອີງຕາມ ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ ສະບັບເລກທີ 34/ສພຊ, ລົງວັນທີ09 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການ ເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19), ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ ອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ຫຼື ໂຄວິດ-19 (COVID-19) ແຈ້ງມາຍັງທ່ານຊາບວ່າ: ປະຈຸບັນ ສະພາບການລະບາດຂອງພະຍາດ COVID-19 ໃນຫຼາຍປະເທດ ຍັງສືບຕໍ່ຂະຫຍາຍເປັນວົງກວ້າງ, ມີການລາຍງານກໍລະນີຕິດເຊື້ອ ແລະເສຍຊີວິດເພີ່ມຂຶ້ນໃນແຕ່ລະວັນ. ສປປ ລາວ, ປະຈຸບັນໄດ້ມີຜູ້ຕິດເຊື້ອພະຍາດ COVID-19 ແລ້ວຈຳນວນໜຶ່ງ ແລະ ຍັງມີຜູ້ສຳພັດໃກ້ຊິດກັບບຸກຄົນດັ່ງກ່າວເປັນຈຳນວນຫຼາຍ ເຊິ່ງເຮັດໃຫ້ມີຄວາມສ່ຽງສູງ ທີ່ຈະເກີດມີຜູ້ຕິດເຊື້ອ ແລະ ແຜ່ຂະຫຍາຍເຊື້ອ COVID-19. ສະນັ້ນ, ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ ແລະ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ອອກໃນວົງກວ້າງ ຢູ່ໃນ ສປປ ລາວ, ເຮັດໃຫ້ຄຳສັ່ງຂອງນາຍົກລັດຖະມົນຕີ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນສູງ.

**ຫ້ອງການ ຄະນະສະເພາະກິດ ອອກບົດແນະນຳ ດັ່ງນີ້:**

1. ໃຫ້ກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ທຸກພາກສ່ວນ ຈົ່ງສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການ ເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (COVID-19), ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ຢ່າງກວ້າງຂວາງ ແລະ ທົ່ວເຖິງ;
   - ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແນະນຳລະອຽດວິທີການ ແລະ ຮູບການໂຄສະນາເຜີຍແຜ່ທີ່ແທດເຖິງ ແລະ ມີປະສິດທິພາບທັງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອພ້ອມກັນຈັດຕັ້ງປະຕິບັດ, ລວມທັງເຜີຍແຜ່ທາງເວບໄຊ www.COVID-19.gov.la;
   - ໃຫ້ກະຊວງສາທາລະນະສຸກ ປັບປຸງຄືນ ເນື້ອໃນໂຄສະນາ, ຂໍ້ແນະນຳໃນການປະຕິບັດມາດຕະການຕ່າງໆຢ່າງລະອຽດ, ກະທັດລັດ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ເພື່ອໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນນຳໄປເຜີຍແຜ່ໃຫ້ທົ່ວເຖິງ ແລະ ປຸກລະດົມໃຫ້ທົ່ວສັງຄົມນຳໄປຈັດຕັ້ງປະຕິບັດ.
2. ໃຫ້ແຕ່ລະກະຊວງ, ອົງການ ແລະ ທຸກພາກສ່ວນພິຈາລະນາວ່າພາກສ່ວນໃດຄວນຈະພັກວຽກທັງໝົດ ຫຼື ດຳເນີນວຽກປົກກະຕິ. ສຳລັບກະຊວງ, ອົງການ ແລະ ພາກສ່ວນທີ່ໄດ້ຮັບອະນຸຍາດໃຫ້ສືບຕໍ່ມາເຮັດວຽກປົກກະຕິ ໃຫ້ຈັດວາງສັບຊ້ອນພະນັກງານຂອງຕົນ ຈັດແບ່ງໃຫ້ມີຜູ້ມາເຮັດວຽກ ຕາມຄວາມ ເໝາະສົມ ແລະ ຄວາມຈຳເປັນຂອງວຽກງານ ເພື່ອຮັບປະກັນບໍ່ໃຫ້ມີການແອອັດຢູ່ສຳນັກງານຫ້ອງການ. ສຳລັບພາກສ່ວນທີ່ໃຫ້ເຮັດວຽກຢູ່ເຮືອນກໍ່ໃຫ້ຜັດປ່ຽນກັນມາປະຈຳການ ເພື່ອຮັບປະກັນບໍ່ໃຫ້ວຽກງານຄ້າງຄາ. ໃຫ້ແຕ່ລະກະຊວງ, ອົງການ ແລະ ພາກສ່ວນຕ່າງໆອອກຂໍ້ແນະນຳລະອຽດຕໍ່ຜູ້ ທີ່ພັກອາໄສຢູ່ເຮືອນ, ການອອກໄປຊື້ເຄື່ອງອຸປະໂພກ-ບໍລິໂພກ, ການຈັດສັນຊື້-ຂາຍຢູ່ຕະຫຼາດ, ຢູ່ຮ້ານຄ້າ-ຮ້ານອາຫານຕ່າງໆຢ່າງເໝາະສົມ ພ້ອມທັງໃຫ້ອອກໜັງສືຢັ້ງຢືນໃຫ້ແກ່ຜູ້ທີ່ຖືກມອບໝາຍໃຫ້ໄປປະຕິບັດໜ້າທີ່;
3. ຜູ້ທີ່ມີຈຸດປະສົງຈະເດີນທາງໄປຕ່າງແຂວງ ຕ້ອງມີໃບຢັ້ງຢືນຈາກ ກະຊວງ, ອົງການຕົ້ນສັງກັດ ຫຼື ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍແຈ້ງເຫດຜົນ ແລະ ຄວາມຈຳເປັນທີ່ຈະຕ້ອງເດີນທາງໄປຕ່າງແຂວງ. ໃຫ້ນະຄອນຫຼວງ, ແຕ່ລະແຂວງຕັ້ງດ່ານກວດກາໜັງສືຢັ້ງຢືນການອະນຸຍາດເດີນທາງ, ວັດແທກອຸນຫະພູມ ເພື່ອປະຕິບັດມາດຕະການຈຳກັດບໍລິເວນຕາມການແນະນຳ ຂອງຄະນະສະເພາະກິດວາງອອກ;
4. ໃຫ້ກະຊວງອຸດສະຫະກຳ ແລະ ການຄ້າ, ຂະແໜງການກ່ຽວຂ້ອງອອກຂໍ້ແນະນຳໃນການຫ້າມກັກຕຸນ ແລະ ຂຶ້ນລາຄາສິນຄ້າທີ່ຈຳເປັນຕໍ່ການກັນການລະບາດ, ການອຸປະໂພກ ແລະ